ຂະແໜງເຕັກໂນໂລຊີ ຂໍ້ມູນຂ່າວສານ (ພວຕຂ) ຈັດພິທີມອບຮັບໃບຢັ້ງຢືນການກວດກາເຄື່ອງໃຊ້ເອເລັກໂຕຣນ
Written by Administrator
Tuesday, 19 September 2017 13:21 - Last Updated Tuesday, 19 September 2017 14:08
ເພື່ອເປັນການຕິດຕາມ ກວດກາ ແລະ ຕີລາຄາຄືນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ
ການລົງກວດກາ ການນໍາເຂົ້າ ແລະ ບໍລິການ ເຄື່ອງໃຊ້ໄຟຟ້າ ເອເລັກໂຕຣນິກ ພາຍໃນແຂວງ
ໃນໄລຍະຜ່ານມາ.

ໃນຕອນເຊົ້ຂອງວັນທີ 19 ກັນຍາ ນີ້ ຂະແໜງ ເຕັກໂນໂລຊີ ຂໍ້ມູນຂ່າວສານ (ພະແນກ ວິທະຍາສາດ
ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ) ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນ ດ້ານມາດຕະຖານ ການນໍາເຂົ້າ
ແລະ ບໍລິການ ເຄື່ອງໃຊ້ເອເລັກໂຕຣນິກ ປະເພດ ຕູ້ ATM ໃຫ້ບັນດາທະນາ ຄານ
ສາຂາແຂວງບໍ່ແກ້ວຂຶ້ນ ຢູ່ທີ່ຫ້ອງປະຊຸມ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ.
ໂດຍໃຫ້ກຽດເປັນປະທານ ພິທີ ແມ່ນ ທ່ານ ໄພວັນ ສ້ອຍທອງ ຮອງຫົວໜ້າ ພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີແຂວງ, ທັງເປັນຄະນະຜູ້ຊີ້ນໍາວຽກງານ ວິຊາການ ຂອງແດ່ລະຂະ ແໜງການພາຍໃນພະແນກ,
ມີຕ່າງໜ້າຂະແໜງການ-ວິຊາການ ແລະ ຕ່າງໜ້າແຕ່ລະທະນາຄານ ເຂົ້າຮ່ວມໃນພິທີຄັ້ງນີ້.
ຈຸດປະສົ່ງຂອງການຂອງການເຕົ້າໂຮມຄັ້ງນີ້; ກໍ່ເພື່ອມອບໃບຢັ້ງຢືນ ການກວດກາ, ກວດສອບ
ມາດຕະຖານ ສີນຄ້ານໍາເຂົ້າປະເພດເຄື່ອງ ໃຊ້ເອເລັກໂຕຣນິກເຊັ່ນວ່າ: ຕູ້ ATM
ຂອງແຕ່ລະທະນາຄານ ທີ່ຕັ້ງຢູ່ສະຖານທີ່ບໍລິການຕ່າງພາຍໃນເທດສະບານແຂວງ ແລະ ເມືອງ,
ເຊີ່ງປະ ກອບມີ ທະນາຄານພັດທະນາລາວ, ທະນາຄານການຄ້າຕ່າງປະເທດລາວ, ທະນາຄານຮ່ວມພັດທະນາ,
ທະນາຄານສົ່ງເສີມກະສິກໍາ, ທະນາຄານ ພົງສະຫວັນ, ທະນາຄານເອຊີລີດາ ແລະ ທະນາຄານນະໂຍບາຍ;
ໃນນັ້ນກໍ່ໄດ້ມີຕ່າງໜ້າ ຂອງແຕ່ລະທະນາຄານເປັນຕົວມາຮັບໃບຢັ້ງຢືນ,
ເຊີງໃຫ້ກຽດມອບໂດຍທ່ານ ໄພວັນ ສ້ອຍທອງ ຮອງຫົວໜ້າພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ;
ຫຼັງຈາກທີ່ມອບ-ຮັບໃບຢັ້ງຢືນ ແລ້ວ; ໃນພິທີຍັງໄດ້ຮັບຟັງການໂອ້ລົມຂອງທ່ານ ໄພວັນ
ສ້ອຍທອງ ຮອງຫົວໜ້າພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ ກ່ຽວກັບ
ການຈັດຕັ້ງປະຕິບັດໃນນີ້ວ່າ: ວຽກດັ່ງແມ່ນ ວຽກທີ່ມີຄວາມສໍາຄັນຫຼາຍ
ຕໍ່ກັບການດໍາລົງຊີວິດ ແລະ ເປັນວຽກທີ່ສອດຫ້ອນເຂົ້າໃນທຸກຂະ ແໜງການ ບໍ່ວ່າພາກລັດ
ກໍ່ພາກເອກະຊົນ; ຍິງມີຄວາມສໍາຄັນຫຼາຍເທົ່າໃດ ກໍ່ຕ້ອງໄດ້ມີການກວດກາ ແລະ
ຄຸ້ມຄອງໃຫ້ດີຂຶ້ນ, ເຊີ່ງມັນເປັນ ຄວາມຮັບຜິດສອບຂອງໝົດທຸກຄົນ ໂດຍສະເພາະພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີ ຂອງພວກເຮົາ ຕາງໜ້າໃຫ້ພັກ-ລັດ ດ້ວຍຖື ເອົາກົດໝາຍ, ມະຕິ
ຄໍາສັງ, ພາລະບົດບາດ, ສິດ ແລະ ໜ້າທີ່ໃນການກວດກາ,
ຄຸ້ມຄອງໃຫ້ເຂົ້າສູ່ລະບຽບການເທື່ອລະກ້າວ.
 1 / 1